ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ


ສຳນັກງານ ຄຄຊ
ຂາເຂົ້າ
ເລກທີ...1083...
ວັນທີ...22 OCT 2015
ໂທລະສັບ 021 217770


ເລກທີ: 41 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 20 ຕຸລາ 2015

ລາຍງານການເຄື່ອນໄຫວປະຈຳອາທິດ

ທີ 05/10/2015 ຫາ 09/10/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນໜຸ້ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກຂອງ ສ.ອາເມລິກາ ເພີ່ມຂຶ້ນເປັນ 103,6 ໃນເດືອນ 9/2015 ຈາກ 101.3 ໃນເດືອນຜ່ານມາ. ໃນຂະນະທີ່, ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກດັດຊະນີພາກການຜະລິດຂອງ ສ.ປຈີນ ເພີ່ມຂຶ້ນເປັນ 49,8 ໃນເດືອນ 9/2015 ຈາກ 49,7 ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/09/2015 | ອາທິດນີ້ 06/10/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---:|---:|---:|
| ເອີໂຣ/ໂດລາ | 1.1251 | 1.1194 | 0.51% |
| ໂດລາ/ເຢນ | 119.66 | 120.36 | -0.58% |
| ໂດລາ/ບາດ | 36.45 | 36.33 | 0.32% |
| ໂດລາ/ເປໂຊ | 46.91 | 46.39 | 1.10% |
| ໂດລາ/ຣູເປີຍ | 14.702.56 | 14.252,78 | 3.16% |
| ໂດລາ/ໂດລາສິງກະໂປ | 1,4300 | 1.4243 | 0,40% |
| ໂດລາ/ຢວນ | 6,3632 | 6.3559 | 0.12% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,47% ຈາກ 46,74 ໂດລາ/ບາເຣວ ມາເປັນ 47,43 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນເພີ່ມຂຶ້ນ ເຫັນໄດ້ຈາກສຳນັກງານພະລັງງານສາກົນ (IEA) ຄາດຄະເນຄວາມຕ້ອງການນ້ຳມັນໂລກເພີ່ມຂຶ້ນຈາກທີ່ຄາດຄະເນຄັ້ງຜ່ານມາ 0,17 ລ້ານບາເຣວ/ວັນ ເປັນ 95,20 ລ້ານບາເຣວ/ວັນ.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,70% ຈາກ 1.128,90 ໂດລາ/ອອນ ມາເປັນ 1.136,75 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,03% ສຳລັບອັດຕາ ທທລ ແຕ່ແຂງຄ່າຂຶ້ນ 0,08% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,23% ສຳລັບອັດຕາ ທທລ ແລະ ອ່ອນຄ່າລົງ 0,03% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,89% ສຳລັບອັດຕາ ທທລ ແລະ ອ່ອນຄ່າລົງ 1,57% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 8,63% ສຳລັບອັດຕາ ທທລ ແລະ ແຂງຄ່າຂຶ້ນ 9,79% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 29/09/2015 | | | ອາທິດນີ້ 06/10/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.141,65 | 8.167,95 | 8.148,39 | 8.138,85 | 8.167,76 | 8.150,75 | 0,03% | 0,00% | -0,03% |
| ບາດ | 226,59 | 227,70 | 227,55 | 227,07 | 228,21 | 228,08 | -0,21% | -0,22% | -0,23% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.202,35 | 8.290,40 | 8.246,38 | 8.196,20 | 8.284,13 | 8.240,17 | 0,08% | 0,08% | 0,08% |
| ບາດ | 228,57 | 229,63 | 229,10 | 228,61 | 229,73 | 229,17 | -0,02% | -0,04% | -0,03% |
| ຜິດດ່ຽງອັດຕາ ທທລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,75% | 1,50% | 1,20% | 0,70% | 1,42% | 1,10% | | | |
| ບາດ | 0,87% | 0,85% | 0,68% | 0,68% | 0,67% | 0,48% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 2,52% ທຽບໃສ່ວັນທີ 02/10/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 22,55%;
- ປະລິມານເງິນ M2 ຫຼຸດລົງ 0,84% ເມື່ອທຽບໃສ່ວັນທີ 02/10/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22,17%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 05/10/2015) ເຫັນວ່າ ທທລ ຂາຍໂດລາສຸດທິ 1,64 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 25,80 ລ້ານໂດລາ ແລະ ຂາຍໂດລາໄດ້ 27,44 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 121,63 ລ້ານບາດ (ໃນນີ້ ຊື້ບາດໄດ້ 187,75 ລ້ານບາດ ແລະ ຂາຍ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທລ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ບາດໄດ້ 309,39 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 64,39% ແຕ່ຫຼຸດລົງ 79,03% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 3,45 ລ້ານໂດລາ ແລະ ເງິນບາດມີຈໍານວນ 11,35 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 23,45 ລ້ານໂດລາ ແຕ່ຊື້ບາດສຸດທິ ຈໍານວນ 124,21 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈໍານວນ 1.056,56 ລ້ານໂດລາ ແຕ່ຂາຍບາດໄດ້ສຸດທິ ຈໍານວນ 301,10 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 28/09/2015 | | ອາທິດທີ 05/10/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21,90 | 234,47 | 15,84 | 173,28 | -27,68% | -26,10% |
| - ທ/ຄທຸລະກິດອື່ນໆ | 79,12 | 119,42 | 9,96 | 14,48 | -87,41% | -87,88% |
| ລວມຊື້: | **101,02** | **353,89** | **25,80** | **187,75** | **-74,46%** | **-46,95%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 29,14 | 169,70 | 21,24 | 158,79 | -27,13% | -6,43% |
| - ທ/ຄທຸລະກິດອື່ນໆ | 19,35 | 1.847,53 | 6,20 | 150,60 | -67,94% | -91,85% |
| ລວມຂາຍ: | **48,49** | **2.017,23** | **27,44** | **309,39** | **-43,41%** | **-84,66%** |
| ຊື້-ຂາຍສຸດທິ ທທກ | **52,53** | **-1.663,34** | **-1,64** | **-121,63** | **-103,13%** | **-92,69%** |
| ຜິດດ່ຽງ ຊື້-ຂາຍ | 52,00 | -470,01 | -6,37 | -64,78 | -583,90% | 405,55% |
| ມູນຄ່າການຊື້-ຂາຍ | **149,52** | **2.371,13** | **53,24** | **497,14** | **-64,39%** | **-79,03%** |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 113,00 | 6,50 | 142,50 | | |
| - ທຫລ ຂາຍໃຫ້ ທທກ | 14,21 | 20,00 | 29,95 | 18,29 | | |
| ຊື້-ຂາຍສຸດທິ ທຫລ | **-14,21** | **93,00** | **-23,45** | **124,21** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **2,46** | **42,59** | **3,45** | **11,35** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,17 | 5.842,27 | 1.313,46 | 3.517,50 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 343,93 | 0,00 | 256,90 | 3.818,60 | | |
| ຊື້-ຂາຍສຸດທິ ທຫລ | **-343,76** | **5.842,27** | **1.056,56** | **-301,10** | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 10/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,26% ເພີ່ມຂຶ້ນ 0,03% ຈາກ 1,23% ໃນເດືອນ 09/2015 ຍ້ອນລາຄາອາຫານຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເນື່ອງຈາກເປັນໄລຍະອອກພັນສາ ແລະ ເລີ່ມມີງານບຸນປະເພນີຕ່າງໆ.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 78,29 ລ້ານໂດລາ ສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 78,2 ທຽບໃສ່ອາທິດຜ່ານມາ.

2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 550 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 48,21% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 332,31 ຕື້ກີບ ຫຼຸດລົງ 57,03% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-08/10/2015) ມີຈຳນວນ 1.408 ຄັ້ງ ໂດຍມີມູນຄ່າ 147,44 ຕື້ກີບ ຫຼຸດລົງ 60,58% ຊຶ່ງທະນາຄານການພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 378 ຄັ້ງ.

2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.230,04 ຈຸດ ເພີ່ມຂຶ້ນ 0,29% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 78.580 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 486,45 ລ້ານກີບ ເພີ່ມຂຶ້ນ 31,82% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 61,81% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.899 ກີບ/ຮຸ້ນ ເພີ່ມຂຶ້ນ 18 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 19.260 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 113,61 ລ້ານກີບ ເພີ່ມຂຶ້ນ 334,44% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 60,98% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,78%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.119 ກີບ/ຮຸ້ນ ເພີ່ມຂຶ້ນ 32 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 36.222 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 221,65 ລ້ານກີບ ເພີ່ມຂຶ້ນ 435,83% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 43,85% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,82%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.901 ກີບ/ຮຸ້ນ ເພີ່ມຂຶ້ນ 201 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 16.738 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 132,24 ລ້ານກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ (LWPC) ທັງໝົດ, ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.978 ກີບ/ຮຸ້ນ ຫຼຸດລົງ 74 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.360 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 18,93 ລ້ານກີບ ຫຼຸດລົງ 92,80%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ: ❶ກອງປະຊຸມເຜີຍແຜ່ກ່ຽວກັບວຽກງານຕະຫຼາດທຶນ ໃນຫົວຂໍ້: "ການລົງທຶນຢ່າງມືອາຊີບກັບຮຸ້ນ" ຢູ່ຄະນະວິທະຍາສາດສິ່ງແວດລ້ອມ ມະຫາວິທະຍາໄລແຫ່ງຊາດ, ❷ກອງປະຊຸມປຶກສາຫາລືກ່ຽວກັບຮູບແບບການຈັດກອງປະຊຸມ CEO ອາຊຽນ ທີ່ ສປປ ລາວ ຈະເປັນເຈົ້າພາບໃນປີ 2016, ❸ກອງປະຊຸມປຶກສາຫາລືກ່ຽວກັບ

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%.

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ,

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ການກະກຽມສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນຮ່ວມກັບກົມ IT ທີ່ ທຫລ, ❹ກອງປະຊຸມສ່ອງແສງສາຍລັດປະຈໍາເດືອນ 9/2015 ທີ່ ທຫລ;

- ສໍາເລັດການຈັດຝຶກອົບຮົມວຽກງານກວດກາ-ພັກລັດ ໃນຂະແໜງການທະນາຄານ ຊຸດທີ VI ປະຈໍາປີ 2015;
- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມໜ່ວຍງານພາຍໃຕ້ວຽກງານອາຊຽນ+3 ທີ່ເມືອງບູຊານ ປະເທດ ສ. ເກົາຫຼີ, ❷ກອງປະຊຸມເຈລະຈາວ່າດ້ວຍການສົ່ງເສີມ ແລະ ອໍານວຍຄວາມສະດວກທາງດ້ານການຄ້າໃນເຂດສາມຫຼ່ຽມພັດທະນາ ກໍາປູເຈຍ-ລາວ-ສຫ. ຫວຽດນາມ ຄັ້ງທີ III ທີ່ແຂວງຈໍາປາສັກ ສປປ ລາວ;
- ສໍາເລັດການຮ່ວມຕ້ອນຮັບຄະນະຊ່ຽວຊານ IMF ກັບພາກສ່ວນກ່ຽວຂ້ອງໃນການມາເຮັດວຽກປະເມີນຜົນເສດຖະກິດມະຫາພາກຂອງ ສປປ ລາວ ປະຈໍາປີ 2015;
- ສໍາເລັດການປັບຂຶ້ນຂອບສ່ວນຕ່າງອັດຕາຊື້-ຂາຍເງິນກີບທຽບບາດ ຈາກ 0,5% ເປັນ 0,75% ແລະ ສໍາເລັດການອອກຂໍ້ຕົກລົງຈັດຕັ້ງປະຕິບັດຂອບດັ່ງກ່າວ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຈັດຕັ້ງແຜນພັດທະນາບຸກຄະລາກອນຮ່ວມກັບ ປະເທດ ສຫ. ຫວຽດນາມ ປະຈໍາປີ 2015 ທີ່ພວມຈັດຕັ້ງປະຕິບັດບັນດາຫົວຂໍ້ທີ່ຍັງຄົງຄ້າງ;
- ສືບຕໍ່ປະສານກັບທະນາຄານແຫ່ງຊາດກໍາປູເຈຍ ກ່ຽວກັບການຈັດກອງປະຊຸມທະວິພາຄີລະຫວ່າງ ທຫລ ແລະ ທຫຈ ປະຈໍາປີ 2015 ທີ່ຣາດຊະອານາຈັກກໍາປູເຈຍ;
- ສືບຕໍ່ຈັດກອງປະຊຸມໃຫຍ່ຄັ້ງທີ I ຂອງໜ່ວຍຊາວໜຸ່ມຣາກຖານ ທຫລ;
- ກະກຽມເຂົ້າຮ່ວມກອງປະຊຸມ ປະເມີນຜົນຄວາມຕ້ອງການພັດທະນາຄວາມສາມາດໃນການຕ້ານການສໍ້ລາດບັງຫຼວງຢູ່ ສປປ ລາວ ທີ່ອົງການກວດກາລັດຖະບານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈໍານວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ; ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຍັດຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກໍາລັງ ທີ່ເດີນທາດຫຼວງ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພິມມະກອນ